ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ:(856-21)520715,ແຟັກ:(856-21)256259

ເລກທີ: 012 ---/ລອທ

ນະຄອນຫຼວງວຽງຈັນ, 25 MAR 2022

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫລັກຊັບລາວ ຈຳກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈຳປີ 2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ຂໍຖືເປັນກຽດ ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາ ບໍລິຫານ ຄັ້ງທີ 01 ປະຈຳປີ 2022 ຊຶ່ງຈັດຂຶ້ນໃນວັນທີ 24 ມີນາ 2022 ເວລາ 09:00 ໂມງ ໂດຍມີລາຍລະອຽດ ດັ່ງລຸ່ມນີ້:

1. ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ແລະ ບົດລາຍງານການເງິນຂອງ ບໍລິສັດ ປະຈຳປີ 2021 ຈາກບໍລິສັດຜູ້ກວດສອບພາຍນອກ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ.
2. ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
3. ຮັບຮອງເອົາການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດປະຈຳປີ 2021 ເນື່ອງຈາກບໍລິສັດຂາດທຶນ ແລະ ສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາ.
4. ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດແຕ່ງຕັ້ງ ຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2022.

5. ເຫັນດີມອບອຳນາດໃຫ້ ທ່ານ ອຸດົມ ແກ້ວທະວົງ ຜູ້ອຳນວຍການບໍລິສັດ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆ ກ່ຽວກັບການກະກຽມຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2021 ໄດ້ທຸກປະການ, ລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.
6. ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ດັ່ງນີ້:
   - ກຳນົດເອົາວັນທີ 06 ເມສາ 2022 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021.
   - ກຳນົດເອົາວັນທີ 27 ເມສາ 2022 ເປັນວັນຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ໂດຍກຳນົດວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ຄື:
     1. ພິຈາລະນາ ແລະ ຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020.
     2. ພິຈາລະນາ ແລະ ຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2021 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2021.
     3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2022.
     4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດປະຈຳປີ 2021 ເນື່ອງຈາກບໍລິສັດຂາດທຶນ.
     5. ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2022.
     6. ເລື່ອງອື່ນໆ (ຖ້າມີ).

ດັ່ງນັ້ນ, ຈຶ່ງແຈ້ງຍັງທ່ານເພື່ອຮັບຊາບ

ດ້ວຍຄວາມນັບຖືເປັນຢ່າງສູງ

ຮອງປະທານສະພາບໍລິຫານ

ທ່ານ ປອ. ນາງ ຄຳແພງ ພັດທະດາວົງ